# ກິຈການ

ໃຈຄວາມສຳຄັນ ການເປັນພິຍານ ບົດ ໑:໘

ຈຳນວນບົດ ໒໘ ບົດ

## ຄຳນຳ

ໃນຄັ້ງແຣກໜັງສືນີ້ບໍ່ມີຫົວຂໍ້ ເພິ່ນຈັດໃສ່ໃນພາຍຫລັງ ແລະຄຳວ່າກິຈການຂອງພວກອັຄສາວົກ ກໍຄືກິຈການຂອງພຣະເຢຊູນັ້ນເອງ ແຕ່ຊົງໂຜດໃຫ້ພວກອັຄສາວົກເປັນຜູ້ກະທຳດ້ວຍພຣະວິນຍານບໍຣິສຸດ ເພື່ອໃຫ້ກິຈການຂອງພຣະອົງທີ່ຊົງເຮັດໄວ້ນັ້ນ ໄດ້ດຳເນີນສືບໄປ

## ວ່າດ້ວຍຜູ້ຂຽນແລະເວລາທີ່ຂຽນ

ພວກຄຣິສຕະຈັກທັງໝົດໄດ້ຖືວ່າ ໜັງສືນີ້ແມ່ນທ່ານລູກາເປັນຜູ້ຂຽນ ສາເຫດທີ່ພາໃຫ້ຖືເຊັ່ນນີ້ກໍມີດັ່ງນີ້: ເພາະສຳນວນພາສາແລະລັກສນະການຂຽນເປັນເຊັ່ນດຽວກັນກັບໜັງສືລູກາ ສນັ້ນຈຶ່ງເຂົ້າໃຈວ່າທ່ານລູກາເປັນຜູ້ຂຽນໜັງສືນີ້ ທ່ານລູກາເປັນຊາວເຮເລັນແລະເຄີຍເປັນທ່ານໝໍ(ໂກໂລດ ໔:໑໔) ຕໍ່ມາເພິ່ນໄດ້ເປັນເພື່ອນເດີນທາງໄປມາດ້ວຍກັນກັບທ່ານໂປໂລ ແລະເຄີຍໄດ້ຢູ່ກຸງໂຣມກັບທ່ານໂປໂລດ້ວຍ (໒໗:໑; ໒໘:໑໖; ໒ ຕີໂມເຕ ໔:໑໑; ຟີເລໂມນ ໒໔)

ພວກເຮົາເຂົ້າໃຈວ່າ ທ່ານລູກາຂຽນໜັງສືນີ້ເວລາເພິ່ນພັກຢູ່ກຸງໂຣມກັບທ່ານໂປໂລ ຄືອາດຈະຂຽນໃນປີ ຄ.ສ. ໖໓

## ວ່າດ້ວຍຄວາມມຸ່ງໝາຍ

໑. ເພາະ ພຣະວິນຍານ ບໍຣິສຸດ ຊົງ ບັນ ດົນ ໃຈ ໃຫ້ ທ່ານ ລູກາ ຂຽນ ໜັງສືນີ້

໒. ໃນມັດທາຍ ໑໖:໑໘ ພຣະເຢຊູຊົງກ່າວວ່າ "ເຮົາຈະສ້າງພວກຊຸມນຸມຂອງເຮົາ" ແລ້ວໃນໜັງສືກິຈການເຮົາເຫັນວ່າ ພຣະອົງກຳລັງຈະທຳການນັ້ນ ເຣື່ອງນີ້ສະແດງໃຫ້ເຫັນວ່າ ຄັນຖ້າໝູ່ສິດຂອງພຣະອົງມອບຕົວກັບພຣະອົງ ແລະຍອມກະທຳທຸກສິ່ງຕາມພຣະວິນຍານພາໄປ ຂ່າວປະເສີດຈະຖືກເຜີຍແຜ່ໄປທົ່ວທຸກບ່ອນ ແລະຄຣິສຕະຈັກຈະຈະເຣີນຂຶ້ນໂດຍບໍ່ມີຜູ້ໃດຫ້າມໄດ້ ໒:໔໗; ໕:໑໔-໑໖; ໖:໗; ໙:໓໑; ໑໓:໔໒; ໑໖:໕; ໑໙:໒໐.

໓. ໜັງສືນີ້ຍັງສະແດງວ່າ ພຣະຄຣິດຊົງເປັນຜູ້ກະທຳການ (ມາຣະໂກ ໑໖:໒໐) ພຣະອົງເປັນຫົວໜ້າໃນການບົວຣະບັດ ສ່ວນພວກລູກສິດພຽງແຕ່ເປັນເຄື່ອງມື ໑:໒໔; ໒:໓໓; ໔:໑໐; ໕:໑໔; ໕:໓໑–໓໒,໔໒; ໗:໕໕; ໘:໔,໕,໓໕

## ວ່າດ້ວຍບົດຕ່າງໆ

ບົດ ໑–໗ ວ່າດ້ວຍການເປັນພະຍານຂອງຄຣິສຕະຈັກທີ່ເມືອງເຢຣູຊາເລັມ

ບົດ ໘–໑໒ ວ່າດ້ວຍການເປັນພະຍານໃນແຂວງຢູດາກັບແຂວງຊະມາເຣັຍ

ບົດ ໑໓–໒໘ ວ່າດ້ວຍການເປັນພະຍານທົ່ວໄປ

ບົດ ໑–໑໒ ທ່ານເປໂຕເປັນຜູ້ສຳຄັນ

ບົດ ໑໓–໒໘ ທ່ານໂປໂລເປັນຜູ້ສຳຄັນ

## ຄວາມເປັນໄປກ່ຽວກັບຄຣິສຕະຈັກ ແລະ ງານຂອງອັຄສາວົກບາງຄົນ

໑. ວັນເກີດຂອງຄຣິສຕະຈັກຄືວັນເພັນເຕກອສເຕ ບົດ ໒ (ເພັນເຕກອດ)

໒. ການແຕ່ງຕັ້ງຜູ້ຮັບໃຊ້ ໗ ຄົນມີທ່ານເອຕຽນ ແລະທ່ານຟີລິບ ເປັນຕົ້ນ ບົດ ໖

໓. ຜົນທີ່ໄດ້ຈາກຄຣິສຕະຈັກເມື່ອຄາວຖືກຂົ່ມເຫັງຢູ່ກຸງເຢຣູຊາເລັມ ບົດ ໘

໔. ເມື່ອຊາວຊະມາເຣັຍໄດ້ຮັບພຣະວິນຍານບໍຣິສຸດ ບົດ ໑໘:໑໔–໑໗

໕. ການປະໃຈເກົ່າເອົາໃຈໃໝ່ຂອງທ່ານໂຊໂລ ບົດ ໙

໖. ເມື່ອຄົນຕ່າງປະເທດຄົນແຣກໄດ້ຮັບພຣະວິນຍານບໍຣິສຸດ ບົດ ໑໐

໗. ເມື່ອທ່ານໂປໂລກັບທ່ານບານາບາຖືກຮັບໃຊ້ໄປປ່າວປະກາດຢູ່ຕ່າງປະເທດ ບົດ ໑໓

໘. ການປະຊຸມຄັ້ງແຣກຢູ່ເມືອງເຢຣູຊາເລັມ ບົດ ໑໕

ฒ. ผົນທີ່ໄດ້ຈາກການທ່ຽວປ່າວປະກາດຂອງທ່ານໂປໂລ

ບົດ ໑໓–໒໑

໑໐. ຜົນທີ່ໄດ້ຈາກທ່ານໂປໂລເມື່ອຖືກຄວບຄຸມຕົວຢູ່ ໃນຄຸກໂຣມ ບົດ ໒໒–໒໘

## ປະໂຫຍດຂອງໜັງສືນີ້

ໜັງສືກິຈການ ໃຊ້ເປັນ ໜັງສືຄູ່ມື ຂອງຜູ້ສອນ ຜູ້ຮຽນ ແລະຜູ້ປ່າວປະກາດທົ່ວໄປ ໃນໜັງສືນີ້ໄດ້ສອນວ່າ ຄຣິສຕຽນຄືຜູ້ຮັບເປັນພະຍານ ສນັ້ນຈຶ່ງສົມຄວນທີ່ທ່ານຈະຕ້ອງອ່ານຕ້ອງຮຽນໜັງສືນີ້ ເພື່ອໃຫ້ເກີດກຳລັງໃຈແລະປະຕິບັດຖືກຕ້ອງເໝືອນດັ່ງຄຣິສຕະຈັກເດີມ ການປ່າວປະກາດຂອງທ່ານເປໂຕແລະຂອງທ່ານໂປໂລ ໄດ້ເປັນແບບຢ່າງດີແກ່ພວກເຮົາ ເພາະເຂົາທັງສອງນີ້ໄດ້ທຳງານ (ຕາມຄຳສັ່ງຂອງພຣະເຢຊູ) ຢ່າງຖືກຕ້ອງແລະຄົບບໍຣິບູນ

### ໑. ວ່າດ້ວຍການປ່າວປະກາດ

ກ. ໃຫ້ບອກວ່າຕ້ອງເປັນພະຍານ ໑:໘

ຂ. ເມື່ອປ່າວປະກາດຈະຕ້ອງເວົ້າແນວໃດ ໒:໑໔–໔໐; ໔:໑໒,໓໓; ໑໗:໒໔–໓໑; ໒໖:໑໗–໑໘

ຄ. ການຈັດແຈ່ງເມື່ອໄປປ່າວປະກາດ ໑໓:໑–໓

### ໒. ວ່າດ້ວຍຄົນທີ່ປະໃຈເກົ່າເອົາໃຈໃໝ່

ກ. ປະຊາຊົນໃນວັນເພັນເຕກອສເຕ ໒:໓໗–໔໑

ຂ. ຊາວເອທິໂອເປັຍ ໘:໒໖–໔໑

ຄ. ໂຊໂລຫລືໂປໂລ ໙:໑–໑໙; ໒໒,໒໖

ງ. ຊາວຕ່າງປະເທດ ໑໐

ຈ. ນາງລີດີ ໑໖:໑໑–໑໕

ສ. ນາຍຄຸກທີ່ເມືອງຟີລິບປອຍ ໑໖:໒໕–໓໔

## ໓ ວ່າດ້ວຍຜູ້ປ່າວປະກາດ

ກ. ການປ່າວປະກາດຂອງທ່ານເປໂຕ ບົດ ໒–໕

ຂ. ການປ່າວປະກາດຂອງທ່ານອອຕຽນ ບົດ ໖–໗

ຄ. ການປ່າວປະກາດຂອງທ່ານຟີລິບ ບົດ ໘

ງ. ການປ່າວປະກາດຂອງທ່ານໂປໂລ ບົດ ໑໔–໒໘

ຈ. ການປ່າວປະກາດຂອງພວກພີ່ນ້ອງ ບົດ ໘:໔

## ໔. ວ່າດ້ວຍຄວາມພົ້ນ

ກ. ຊ່ອງທາງແຫ່ງຄວາມພົ້ນ ໒:໓໘

ຂ. ການປະໃຈເກົ່າເອົາໃຈໃໝ່ ໓:໑໙–໒໐

ຄ. ຄວາມເຊື່ອຈ່ອຍໃຫ້ພົ້ນໄດ້ ໘:໓໖ ໓໗; ໑໖:໓໑

ງ. ການໄດ້ຮັບອະໄພໂທດ ໑໐:໔໓; ໑໓:໓໘–໓໙

## ໕. ວ່າດ້ວຍຄຣິສຕະຈັກ

ໃນໜັງສືກິຈການນີ້ໄດ້ມີແບບຢ່າງອັນດີຂອງພວກຄຣິສຕະຈັກດັ້ງເດີມ ສັນນັ້ນຈິ່ງສົມຄວນທີ່ພວກເຮົາຈະຕ້ອງຮຽນແລະປະຕິບັດຕາມແບບຢ່າງເຫລົ່ານີ້

ກ. ວັນເກີດຂອງຄຣິສຕະຈັກ ກິດ ໒:໔໑

ຂ. ການປະພຶດຂອງພວກຄຣິສຕະຈັກ ກິດ ໒:໔໒–໔໗; ໔:໓໒–໓໗

ຄ. ຄວາມຈະເຣີນຂອງຄຣິສຕະຈັກ ກິດ ໒໐:໒໗–໒໘ ໔:໔; ໙:໓໑

ງ. ການແຕ່ງຕັ້ງພາຍໃນຄຣິສຕະຈັກ ໖:໑–໔; ໑໔:໒໓; ໒໐:໒໗–໒໘

ຈ. ການປະຊຸມຄັ້ງແຣກຂອງພວກຄຣິສຕະຈັກ ກິດ ໑໕

## ດ. ວ່າດ້ວຍພຣະວິນຍານບໍຣິສຸດ

ກ. ການປະຕິຍານຮັບເອົາພຣະວິນຍານບໍຣິສຸດ ກິດ ໑:໔–໘

ຂ. ການຄອຍຖ້າພຣະວິນຍານບໍຣິສຸດ ກິດ ໑:໑໓–໑໔

ຄ. ການສະເດັດລົງມາຄັ້ງແຣກຂອງພຣະວິນຍານບໍຣິສຸດ ກິດ ໒:໑–໑໓

ງ. ຣິດທານຸພາບຂອງພຣະວິນຍານບໍຣິສຸດ ກິດ ໒:໔໗; ໓:໖; ໔:໓໑; ໕:໑໒; ໑໔; ໙:໓໑,໓໔; ໑໔:໑໐; ໑໕:໑໒

ຈ. ຄົນທີ່ເຊື່ອເຕັມໄປດ້ວຍພຣະວິນຍານ ກິດ ໘:໑໕–໑໗; ໑໐:໔໔–໔໖; ໑໙:໑–໗

## ຕ. ວ່າດ້ວຍການອ້ອນວອນ

ພວກອັຄສາວົກ ໄດ້ເອົາ ໃຈໃສ່ ໃນການ ອ້ອນວອນ ແລະຮ້ອງຂໍຕໍ່ພຣະອົງເຈົ້າ ສນັ້ນພວກເພິ່ນຈຶ່ງມີອຳນາດໃນການປ່າວປະກາດຕໍ່ໄປ

ກ. ການອ້ອນວອນຢູ່ຫ້ອງຊັ້ນເທິງ ກິດ ໑:໑໓–໑໔

ຂ. ເມື່ອຖືກຂົ່ມເຫັງ ບົດ ໔:໒໓–໓໑

ຄ. ເມື່ອເວລາບ່າຍສາມໂມງ ບົດ ໓:໑

ງ. ການອ້ອນວອນຂອງພວກຄຣິສຕະຈັກ ບົດ ໔:໒໔; ໑໒:໕

ຈ. ການອ້ອນວອນຂອງຜູ້ຖືກຂ້າ ບົດ ໗:໕໕–໖໐

ສ. ການອ້ອນວອນຂອງພວກພະຍາກອນແລະຂອງຄຣູສອນ ບົດ ໑໓:໑–໑໓

ຊ. ການອ້ອນວອນຂອງອັຄສາວົກ ບົດ ໖:໔

ຍ. ການອ້ອນວອນຂອງໂປໂລກັບພວກເຖົ້າແກ່ ບົດ ໒໐:໓໖–໓໘

ການແບ່ງເປັນພາກ

ພາກທີ ໑ ການເປັນພະຍານຂອງພວກຄຣິສຕະຈັກໃນທ່າມກາງພວກຢູດາ ບົດ ໑–໗

ພາກທີ ໒ ການເປັນພະຍານຂອງພວກຄຣິສຕະຈັກໃນແຂວງຢູດາ ແລະ ແຂວງຊະມາເຣັຍ ບົດ ໘–໑໒

ພາກທີ ໓ ການເປັນພະຍານຂອງພວກຄຣິສຕະຈັກໃນທ່າມກາງຊາວຕ່າງປະເທດ ບົດ ໑໓–໒໘

໑. ການທ່ຽວໄປປ່າວປະກາດຂອງທ່ານໂປໂລ ບົດ ໑໓:໑ - ໒໑:໑໓

ກ. ການທ່ຽວໄປປ່າວປະກາດຄັ້ງແຣກກັບທ່ານບານາບາ ບົດ ໑໓–໑໔

ຂ. ການທ່ຽວໄປປ່າວປະກາດຢູ່ແຄວ້ນອາເຊັຍ ບົດ ໑໓:໔–໑໔:໒໘

ຄ. ການໄປປະຊຸມຢູ່ເມືອງເຢຣູຊາເລັມ ບົດ ໑໕:໑–໓໕

ງ. ການທ່ຽວໄປປ່າວປະກາດຄັ້ງທີສອງກັບທ່ານສີລາ ບົດ ໑໕:໓໖-໑໘:໒໒

- ຢູ່ແຄວ້ນອາເຊັຍ ບົດ ໑໕:໓໖–໑໖:໑໐
- ໃນແຂວງມາກະໂດເນັຍ ບົດ ໑໖:໑໑–໑໗:໑໕
- ຢູ່ເມືອງອາແຖນ ບົດ ໑໗:໑໖–໑໘:໒໒

  (ໃນເວລານັ້ນໄປໂລໄດ້ຂຽນໜັງສື ໑ ເທຊາໂລນິກ ແລະ ໒ ຈາກເມືອງໂກໂລດ)

ຈ. ການທ່ຽວໄປປ່າວປະກາດຄັ້ງທີສາມ ບົດ ໑໘:໒໓–໒໑:໑໖

- ການທ່ຽວໄປປ່າວປະກາດຢູ່ແຄວ້ນອາເຊັຍ ບົດ ໑໘:໒໓–໑໙:໔໑

  (ໄປໂລໄດ້ຂຽນໜັງສື ໑ ໂກລິນໂທຈາກເມືອງເອເຟດ)
- ຢູ່ທະວີບຢູໂຣບ ບົດ ໒໐:໑–໕

  (ໄປໂລຂຽນໜັງສື ໒ ໂກລິນໂທຈາກແຂວງມາເຊັດວັນ, ໜັງສືຄາລາຊີ, ແລະໜັງສືໂຣມຈາກເມືອງໂກລິນໂທ)
- ເມື່ອກັບຄືນກຸງເຢຣູຊາເລັມ ບົດ ໒໐:໖–໒໑:໑໖

໖. ຄາວທ່ານໄປໂລພັກຢູ່ແລະຖືກຂັງໄວ້ ບົດ ໒໑:໑໗–໒໘:໓໑

– ເມື່ອພັກຢູ່ທີ່ກຸງເຢຣູຊາເລັມ ບົດ ໒໑:໑໗–໒໓:໓໕
– ເມື່ອຖືກຈັບ ບົດ ໒໑:໑໗–໓໖
– ເມື່ອແກ້ຄວາມ ບົດ ໒໑:໓໗–໒໓:໑໑
– ເມື່ອຄາວກັນດານ ບົດ ໒໓:໑໒–໓໕
– ເມື່ອຢູ່ເມືອງກາຍຊາເຣັຍ ບົດ ໒໔–໒໖
– ເມື່ອໃຫ້ການຕໍ່ໜ້າເຈົ້າແຂວງເຟລິກ ບົດ ໒໔
– ເມື່ອໃຫ້ການຕໍ່ໜ້າເຈົ້າແຂວງເຟຊະໂລ ບົດ ໒໕:໑–໑໒
– ເມື່ອໃຫ້ການຕໍ່ພຣະມັກກະສັດອາກຣິບປາ ບົດ ໒໕:໑໓–໒໖:໓໒

໗. ເມື່ອຢູ່ກຸງໂຣມຣະຫວ່າງສອງປີ ບົດ ໒໗–໒໘

– ເມື່ອທຽວໄປທາງນ້ຳທະເລ ບົດ ໒໗
– ເມື່ອຢູ່ເກາະມາເລເຕ ບົດ ໒໘:໑–໑໐
– ເມື່ອຢູ່ກຸງໂຣມ ບົດ ໒໘:໑໑–໓໑
  (ໄປໂລໄດ້ຂຽນໜັງສືເອເຟດ, ໂກໂລດ, ຟີເລໂມນ, ແລະ ຟີລິບທີ່ກຸງໂຣມ)